# ພຣະທັມຮາບາກຸກ

| | | |
|---|---|---|
| 1 | 2 | 3 |

## ຮາບາກຸກ

## HABAKKUK

1 ຕໍ່ໄປນີ້ ແມ່ນຖ້ອຍຄຳທີ່ພຣະຜູ້ເປັນເຈົ້າ ຊົງສະແດງຕໍ່ຜູ້ປະກາດພຣະທັມ ຮາບາກຸກ

**ຮາບາກຸກຮ້ອງຂໍຄວາມເປັນທັມ**

The Prophet's Complaint

2 ໂອ ພຣະຜູ້ເປັນເຈົ້າ ກ່ອນພຣະອົງຈະຊ່ອຍຂ້າພຣະອົງໃຫ້ພົ້ນຈາກການທຳລາຍ ຂ້າພຣະອົງຈະຕ້ອງຮ້ອງຂໍ
ຄວາມຊ່ອຍເຫລືອຈາກພຣະອົງອີກດົນປານໃດ? ພຣະອົງຈຶ່ງຈະຮັບຟັງຂ້າພຣະອົງ
3 ເປັນຫຍັງພຣະອົງຈຶ່ງຊົງເຮັດໃຫ້ຂ້າພຣະອົງພົບພໍ້ກັບຄວາມທຸກຍາກລຳບາກ ແລະເຄາະເຂັນເຊັ່ນນີ້ ການທຳ
ລາຍ ແລະການເຂັ່ນຂ້າຫາລຸນຢູ່ອ້ອມຮອບຂ້າພຣະອົງ ການສູ້ຮົບຕົບຕີ ແລະການທະເລາະວິວາດກັນມີຢູ່ທົ່ວ
ທຸກຫົນທຸກແຫ່ງ
4 ກົດຫມາຍຂາດຄວາມສັກສິດ ແລະໄຮ້ປໂຍດ ຄວາມຍຸດຕິທັມບໍ່ເຄີຍມີເລີຍ ສະນັ້ນ ຄົນຊົ່ວຈຶ່ງໃຊ້ອຳນາດຂົ່ມ
ເຫັງຄົນດີ ໂດຍບິດເບືອນຄວາມຍຸດຕິທັມ

**ພຣະຜູ້ເປັນເຈົ້າຊົງຕອບຄວາມຮ້ອງທຸກ**

5 ຕໍ່ມາ ພຣະຜູ້ເປັນເຈົ້າຊົງເວົ້າຕໍ່ໄພ່ພົນຂອງພຣະອົງວ່າ, "ຈົ່ງເບິ່ງ ຊົນຊາດທັງຫລາຍອ້ອມແອ້ມເຈົ້າ ແລະເຈົ້າ
ຈະປລາດໃຈຕໍ່ສິ່ງທີ່ເຈົ້າເຫັນ ເພາະວ່າໃນສມັຍຂອງເຈົ້າ ເຮົາຈະໃຫ້ບາງສິ່ງເກີດຂຶ້ນ ແລະເມື່ອພວກເຈົ້າໄດ້ຍິ
ນສິ່ງນັ້ນພວກເຈົ້າກໍຈະບໍ່ເຊື່ອ
6 ເຮົາພວມນຳຊາວບາບີໂລນຄື ພວກທີ່ໂຫດຮ້າຍແລະໃຈຮ້ອນມາໃຫ້ມີອຳນາດ ພວກມັນກຳລັງອອກໄປຍຶດ
ແລະຄອບຄອງປະເທດທັງຫລາຍທົ່ວໂລກ
7 ສ້າງຄວາມຫວາດກົວ ແລະຄວາມອົນລະທົນຂຶ້ນທົ່ວໄປ ໂດຍເປັນຜູ້ອອກກົດຫມາຍແລະໃຊ້ກົດຫມາຍເອງ
8 ມ້າຂອງພວກມັນແລ່ນໄວກວ່າເສືອດາວ ແລະຮ້າຍກາດກວ່າຫມາໄນທີ່ຫິວເຫຍື່ອ ທະຫານຂອງພວກມັນຂີ່ມ້າ
ຫອບມາແຕ່ໄກໆໄວເຫມືອນແຫລວເຈີດໄປກິນເຫຍື່ອ
9 ກອງທັບຂອງພວກມັນບຸກເຂົ້າຄອບຄອງຢ່າງຮ້າຍກາດ ເມື່ອມັນບຸກເຂົ້າມາໃກ້ ທຸກໆຄົນກໍຢ້ານກົວຕົວສັ່ນຈົນ
ຂວັນເສັຽ ຊະເລີຍທີ່ມັນຈັບໄດ້ມີຫລາຍເຫມືອນດັ່ງເມັດຊາຍ ຊຶ່ງບໍ່ສາມາດຄະນານັບໄດ້
10 ພວກມັນດູຖູກບັນດາກະສັດ ແລະຫົວເຍາະເຍີ້ຍໃສ່ບັນດາມະຫາເສນາອຳມາດ ບໍ່ມີປ້ອມປ້ອງກັນບ່ອນໃດສາ
ມາດຕ້ານທານການບຸກລຸກຂອງພວກມັນໄດ້ ມັນໃຊ້ວິທີການຍຶດປ້ອມ ໂດຍກອງດິນຂຶ້ນໃຫ້ສູງເທົ່າປ້ອມແລ້ວ
ກໍເຂົ້າຍຶດ
11 ເມື່ອຍຶດໄດ້ແລ້ວ ພວກມັນກໍກວາດເອົາສິ່ງຂອງໄປຫມົດເຫມືອນລົມພັດຜ່ານເອົາໄປ ຄົນພວກນີ້ບູຊາອຳນາດ
ຂອງຕົນເອງ

**ຮາບາກຸກຮ້ອງທຸກຂໍຄວາມເປັນທັມ**

12 ໂອ ພຣະຜູ້ເປັນເຈົ້າ ພຣະອົງເປັນພຣະເຈົ້າຕັ້ງແຕ່ໃດໆມາ ພຣະອົງເປັນພຣະເຈົ້າຂອງຂ້າພຣະອົງ ເປັນພຣະ
ເຈົ້າອົງບໍລິສຸດແລະອົງຊົງເປັນຢູ່ສືບໆໄປ ໂອ ພຣະຜູ້ເປັນເຈົ້າ ພຣະເຈົ້າອົງປົກປັກຮັກສາຂອງຂ້າພຣະອົງ ພ
ຣະອົງໄດ້ເລືອກເອົາພວກບາບີໂລນ ແລະໄດ້ເຮັດໃຫ້ພວກມັນມີອຳນາດເພື່ອລົງໂທດພວກຂ້າພຣະອົງ
13 ແຕ່ເປັນຫຍັງພຣະອົງຈຶ່ງຊົງມິດງຽບຢູ່ໃນ ເມື່ອພວກມັນທຳຮ້າຍຄົນດີໆກວ່າພວກມັນ?
14 ດ້ວຍເຫດໃດ ພຣະອົງຈຶ່ງຖືປະຊາຊົນເໝືອນປາ ແລະເໝືອນສັດເລືອຄານ?
15 ຊາວບາບີໂລນໄດ້ຈັບປະຊາຊົນເໝືອນຕຶກເບັດເອົາປາ ພວກເຂົາເອົາມອງກວາດເອົາປະຊາຊົນເໝືອນລາກ
ປາໃນມອງຂຶ້ນມາຈາກນໍ້າດ້ວຍສຽງໂຮ່ຮ້ອງຍິນດີ
16 ພວກເຂົາບູຊາມອງ ແລະຖວາຍເຄື່ອງບະບົນໃຫ້ມັນ ເພາະວ່າມອງພາໃຫ້ພວກເຂົາໄດ້ໃຊ້ຊີວິດຢູ່ຢ່າງພູມ
ເຟືອຍ
17 ພວກເຂົາຈະໃຊ້ດາບທຳຮ້າຍຊົນຊາດຕ່າງໆ ໄຮ້ຄວາມເມດຕາ ດັ່ງນີ້ຕລອດໄປຫລື?

## 2 ພຣະຜູ້ເປັນເຈົ້າຕອບຄຳຮ້ອງທຸກຂອງຮາບາກຸກ

God's Reply to the Prophet's Complaint

1 ຂ້າພະເຈົ້າຈະຂຶ້ນໄປຢືນທີ່ຫໍຄອຍ ແລະຖ້າຊອມເບິ່ງວ່າ ພຣະຜູ້ເປັນເຈົ້າຈະເວົ້າຫຍັງຕໍ່ຂ້າພະເຈົ້າ ແລະຂ້າພະ
ເຈົ້າຈະໄດ້ຮັບຄຳຕອບຢ່າງໃດຈາກພຣະອົງກ່ຽວກັບການຮ້ອງທຸກນັ້ນ
2 ພຣະຜູ້ເປັນເຈົ້າໃຫ້ຄຳຕອບແກ່ຂ້າພະເຈົ້າວ່າ, "ຈົ່ງຂຽນເຣື່ອງທີ່ເຮົາບອກແກ່ເຈົ້າທາງນິມິດໃສ່ແຜ່ນປ້າຍ ໃຫ້
ທຸກຄົນອ່ານເຂົ້າໃຈໄດ້ງ່າຍ
3 ຂຽນນິມິດນີ້ໄວ້ ກໍເພາະວ່າສິ່ງທີ່ເຮົາບອກມານັ້ນຍັງບໍ່ເຖິງເວລາທີ່ຈະເກີດຂຶ້ນເປັນຈິງມາເທື່ອ ແຕ່ກຳນົດນັ້ນຈະ
ມາເຖິງໃນໄວໆນີ້ ແລະສິ່ງທີ່ເຮົາໄດ້ບອກກັບເຈົ້າກໍຈະກາຍເປັນຈິງ ເຈົ້າອາດຈະຄິດວ່າມັນມາຊ້າແຕ່ໃຫ້ຄອຍ
ເບິ່ງເທາະ ມັນຈະມາຮອດຕາມເວລາທີ່ເຮົາໄດ້ກຳນົດໄວ້
4 ເບິ່ງແມ ຜູ້ທີ່ໂອ້ອວດກໍບໍ່ມີໃຈທ່ຽງທັມ ແຕ່ວ່າຄົນຊອບທັມຈະມີຊີວິດດຳລົງຢູ່ໂດຍຄວາມເຊື່ອ
5 ຍິ່ງໄປກວ່ານັ້ນ ເພາະເຂົາໄດ້ເມົາໂດຍເຫລົ້າອະງຸ່ນເຂົາຈຶ່ງເປັນຄົນຈອງຫອງ ເຂົາບໍ່ຍອມຢູ່ເຮືອນ ຄວາມໂລບ
ຂອງເຂົາກໍກວ້າງເໝືອນນະຮົກ ເໝືອນຄວາມຕາຍທີ່ບໍ່ຮູ້ຈັກອີ່ມ ເຂົາຮວບຮວມປະຊາຊາດທັງຫລາຍມາເພື່ອ
ຕົວເຂົາເອງ ແລ້ວໂຮມເອົາຊາດທັງຫລາຍມາເປັນຂອງຕົນ.

### ເຄາະກັມຂອງຄົນຊົ່ວມາເຖິງ

The Woes of the Wicked

6 ບັນດາປະຊາຊາດເຫລົ່ານັ້ນຈະບໍ່ຍົກຄຳເຍີ້ຍຫຍັນກ່າວຕໍ່ເຂົາຫລື ແລະຍົກສຸພາສິດກ່າວເຍາະເຍີ້ຍເຂົາວ່າ,
"ວິບັດແກ່ຜູ້ທີ່ສະສົມສິ່ງຂອງທີ່ບໍ່ແມ່ນຂອງຕົນໄວ້ (ຈະທຳແບບນີ້ໄດ້ດົນປານໃດຫນໍ) ແລະບັນທຸກຂອງທີ່ຍຶດ
ເປັນປະກັນໄວ້ເຕັມຕົວ
7 ກ່ອນພວກເຈົ້າຮູ້ເມື່ອ ພວກລູກຫນີ້ກໍຈະບຸກມາບີບບັງຄັບ ແລ້ວເອົາເຄື່ອງຄືນໄປ ສັດຕຣູຈະບຸກເຂົ້າມາທຳໃຫ້
ພວກເຈົ້າຍ້ານຈົນຕົວສັ່ນຂວັນເສັຽ ພວກເຂົາຈະປຸ້ນເອົາຂອງພວກເຈົ້າ
8 ພວກເຈົ້າໄດ້ປຸ້ນປະຊາຊົນທັງຫລາຍຄື ໄດ້ຂ້າແລະໄດ້ກົດຂີ່ຂົ່ມເຫັງຊາວໂລກແລະທຳລາຍທົ່ວເມືອງຕ່າງໆ
ບັດນີ້ ຜູ້ທີ່ຍັງມີຊີວິດຢູ່ກໍຈະປຸ້ນເຈົ້າຄືກັນ
9 ເຄາະກັມຂອງເຈົ້າມາເຖິງແລ້ວ ພວກເຈົ້າໄດ້ເຮັດໃຫ້ຄອບຄົວຮັ່ງມີເປັນດີຂຶ້ນຍ້ອນເຂັ່ນຂ້າທາລຸນຄົນອື່ນ ແລ້ວ
ພຍາຍາມເຮັດໃຫ້ຄອບຄົວຢູ່ຢ່າງສງົບສຸກແລະປອດພັຍ
10 ເລ້ກົນຂອງພວກເຈົ້າໄດ້ນຳຄວາມອັບອາຍມາສູ່ຄອບຄົວຂອງພວກເຈົ້າແລ້ວ ການທຳລາຍບັນດາຊົນຊາດ
ຕ່າງໆນັ້ນມັນກໍເປັນແຕ່ພຽງການນຳເອົາຄວາມຈິບຫາຍມາສູ່ພວກເຈົ້າເອງ

11 ແມ່ນແຕ່ກ້ອນຫີນໃນກຳແພງກໍຈະຮ້ອງດ່າຕໍ່ສູ້ພວກເຈົ້າ ແລະໄມ້ກອນເຮືອນກໍຈະສົ່ງສຽງດັງກຶກກ້ອງອອກມາ
12 ເຄາະກັມຂອງພວກເຈົ້າມາເຖິງແລ້ວ ພວກເຈົ້າວາງຮາກຖານເມືອງດ້ວຍອາຊະຍາກັມ ແລະສ້າງເມືອງຂຶ້ນ
ດ້ວຍຄາຕະກັມ
13 ບັນດາຊົນຊາດທັງຫລາຍທີ່ພວກເຈົ້າເຂົ້າຄອບຄອງເຮັດວຽກໄຮ້ປໂຍດຊື່ໆ ເພາະທຸກສິ່ງທີ່ພວກເຂົາສ້າງຂຶ້ນ
ນັ້ນກໍຖືກໄຟໄຫມ້ຫມົດ ບໍ່ໄດ້ເປັນເຊັ່ນນີ້ເພາະພຣະຜູ້ເປັນເຈົ້າຈອມໂຍທາດອກຫລື?
14 ທະເລມີນໍ້າເຕັມຢູ່ສັນໃດ ຄວາມຮູ້ກ່ຽວກັບຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າກໍຈະເຕັມຢູ່ໃນໂລກນີ້ສັນ
ນັ້ນ
15 ເຄາະກັມຂອງພວກເຈົ້າມາເຖິງແລ້ວ ເວລາພວກເຈົ້າຄຽດຮ້າຍຫຍໍ້ຫຍັນເພື່ອນບ້ານ ແລະເຮັດໃຫ້ພວກເຂົາ
ເສື່ອມເສັຽ ແລະໄດ້ຮັບຄວາມອັບອາຍຂາຍຫນ້າ
16 ພວກເຈົ້າຈະອັບອາຍຂາຍຫນ້າແທນທີ່ຈະໄດ້ຮັບກຽດຕິຍົດ ພຣະຜູ້ເປັນເຈົ້າຈະມອບຈອກຊຶ່ງເປັນການລົງ
ໂທດນີ້ໃຫ້ພວກເຈົ້າດື່ມ ແລ້ວກຽດຕິຍົດຂອງພວກເຈົ້າກໍຈະເສື່ອມເສັຽໄປ
17 ພວກເຈົ້າໄດ້ຂ້າສັດປ່າ ແລະບັດນີ້ສັດນັ້ນກໍຈະທຳໃຫ້ພວກເຈົ້າຢ້ານ ເຫດການເຫລົ່ານີ້ແຫລະ, ຈະເກີດຂຶ້ນກໍ
ຍ້ອນວ່າ ພວກເຈົ້າໄດ້ຂ້າ ແລະກົດຂີ່ຂົ່ມເຫັງຊາວໂລກ ແລະທຳລາຍທົ່ວເມືອງຕ່າງໆ
18 ຮູບໂຄຣົບໃຫ້ຜົນປໂຍດຫຍັງແດ່? ມັນເປັນພຽງແຕ່ຮູບທີ່ມະນຸດຜູ້ນຶ່ງໄດ້ເຮັດຂຶ້ນເທົ່ານັ້ນ ແລະກໍບໍ່ສາ
ມາດບອກຄວາມຈິງຕໍ່ພວກເຈົ້າໄດ້ ມັນດີແນວໃດ? ຜູ້ສ້າງຮູບຈຶ່ງປົງໃຈໃນຮູບທີ່ປາກບໍ່ໄດ້ນັ້ນ
19 ເຄາະກັມພວກເຈົ້າມາເຖິງແລ້ວ ພວກເຈົ້າເວົ້າຕໍ່ຮູບໄມ້ວ່າ, “ລຸກຂຶ້ນແມ” ຫລືເວົ້າຕໍ່ກ້ອນຫີນວ່າ, “ຢືນຂຶ້ນແມ”
ແຕ່ຮູບໂຄຣົບນັ້ນສອນຫຍັງແດ່? ຮູບນັ້ນຈະໂອບດ້ວຍເງິນຫລືຄຳ ແຕ່ມັນກໍບໍ່ມີຊີວິດຈິດໃຈເລີຍ
20 ພຣະຜູ້ເປັນເຈົ້າຊົງປະທັບຢູ່ໃນວິຫານອັນສັກສິດ ມະນຸດທຸກຄົນໃນໂລກນີ້ຈົ່ງມິດງຽບຢູ່ຕໍ່ຫນ້າພຣະພັກພຣະຜູ້
ເປັນເຈົ້າເທີນ

## 3

1 ຄຳອ້ອນວອນຂອງຜູ້ປະກາດພຣະທັມ ຮາບາກກຸກ

**ຄຳອ້ອນວອນຂອງຮາບາກກຸກ**

The Prophet's Prayer

2 ໂອ ພຣະຜູ້ເປັນເຈົ້າ ຂ້າພຣະອົງໄດ້ຍິນກ່ຽວກັບສິ່ງທີ່ພຣະອົງໄດ້ກະທຳ ແລະຂ້າພຣະອົງໄດ້ເຕັມໄປດ້ວຍ
ຄວາມເກງກົວ ບັດນີ້ ຂໍຊົງຮື້ຟື້ນພຣະຣາຊກິດຂອງພຣະອົງຂຶ້ນໃຫມ່ ໃນເວລາທີ່ພວກຂ້າພຣະອົງຍັງມີຊີວິດຢູ່
ຄືການກະທຳອັນຍິ່ງໃຫຍ່ທີ່ພຣະອົງໄດ້ເຄີຍທຳແຕ່ສມັຍກ່ອນ ແມ່ນວ່າຍາມພຣະອົງພຣະພິໂຣດ ຂໍຊົງເມດຕາ
ແດ່ຖ້ອນ
3 ພຣະເຈົ້າຈະກັບມາຈາກເມືອງເອໂດມອີກ ພຣະເຈົ້າອົງບໍຣິສຸດຈະມາແຕ່ພູປາຣານ ຄວາມສະງ່າຣາສີຂອງພ
ຣະອົງປົກຄຸມທົ່ວຟ້າສວັນ ທົ່ວໂລກກໍເຕັມໄປດ້ວຍການສັຣເສີນພຣະອົງ
4 ພຣະອົງສະເດັດມາພ້ອມແສງສວ່າງຂອງຟ້າແມບເຫລື້ອມ ພຣະຫັດຂອງພຣະອົງມີແສງເຫລື້ອມມາບໆ ຊຶ່ງ
ຣິດທານຸພາບຂອງພຣະອົງໄດ້ເຊື່ອງໄວ້ໃນທີ່ນັ້ນ
5 ພຣະອົງໃຫ້ໂຣກລະບາດມາກ່ອນ ແລະໃຫ້ຄວາມຕາຍມາຕາມຫລັງ
6 ເມື່ອພຣະອົງຊົງຢຸດໂລກກໍເກີດຫວັ່ນໄຫວ ເມື່ອພຣະອົງຊົງທອດພຣະເນດບັນດາຊົນຊາດກໍຢ້ານຈົນຕົວສັ່ນ
ຂວັນເສັຽ ບັນດາພູເຂົາທີ່ຫມັ້ນຄົງກໍແຕກສລາຍໄປ ແລະເນີນພູທີ່ຕັ້ງຢູ່ຕລອດການກໍຍຸບລົງ ຄືເນີນພູບ່ອນທີ່ພ
ຣະອົງໄດ້ຍ່າງແຕ່ສມັຍດຶກດຳບັນ
7 ຂ້າພຣະອົງໄດ້ເຫັນພົນລະເມືອງກູຊານຢ້ານກົວ ແລະພົນລະເມືອງມີດີອານຕົວສັ່ນຂວັນເສັຽ

8 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອພຣະອົງສະເດັດຊົງຣົດມ້າທີ່ເປັນເຝືອຜ່ານໄປທ່າມທາງກ້ອນເມກ ເພື່ອນຳຊັຍ
ຊະນະມາສູ່ໄພ່ພົນຂອງພຣະອົງ ພຣະອົງຊົງພຣະພິໂຣດແມ່ນ້ຳຫລື ຫລືວ່າຊົງກິ້ວໂກດນ້ຳທະເລ
9 ພຣະອົງຊົງພ້ອມທີ່ຈະໃຊ້ຫນ້າທະນູຂອງພຣະອົງທຸກເວລາ ລູກຫນ້າຂອງພຣະອົງກໍເຕັມບັ້ງຢູ່ສເມີ ຟ້າຜ່າແຍກ
ແຜ່ນດິນໂລກອອກຈາກກັນໄດ້
10 ເມື່ອພູເຂົາທັງຫລາຍໄດ້ເຫັນພຣະອົງກໍສັ່ນສະເທືອນ ແລ້ວຝົນກໍຫລັ່ງລົງຈາກທ້ອງຟ້າ ນ້ຳຢູ່ໃຕ້ພື້ນພິພົບກໍຊັດ
ຂຶ້ນສຽງດັງ ສນັ່ນ ແລະຟອງຂອງມັນກໍຟົ້ງຂຶ້ນສູງ
11 ດວງຕາເວັນແລະດວງເດືອນຍັງຢູ່ກັບບ່ອນຂອງມັນ ເມື່ອແສງແວວວາບຂອງທະນູ ແລະແສງສະທ້ອນຂອງ
ຫອກຂອງ ພຣະອົງພຸ້ງຜ່ານໄປ
12 ພຣະອົງສະເດັດເທິງໂລກດ້ວຍຄວາມພິໂຣດ ແລະຢຽບຢ່ຳຊົນຊາດທັງຫລາຍດ້ວຍຄວາມກິ້ວໂກດ
13 ພຣະອົງສະເດັດອອກໄປຊ່ອຍໄພ່ພົນ ແລະເຈົ້າຊີວິດທີ່ພຣະອົງຊົງເລືອກໄວ້ ພຣະອົງຊົງທຳລາຍຜູ້ນຳຂອງຄົນ
ຊົ່ວ ແລະລ້າງຜານພັກພວກຂອງມັນຈົນຫມົດກ້ຽງ
14 ລູກຫນ້າທະນູຂອງພຣະອົງແທງຫົວຫນ້ານັກຮົບຂອງເຂົາ ຊຶ່ງບຸກເຂົ້າມາເຫມືອນລົມພະຍຸພັດ ແລະເຫມືອນ
ຄົນມັກຂົ່ມເຫັງຄົນຍາກຈົນຢ່າງລັບໆ ເພື່ອທຳໃຫ້ພວກເຮົາແຕກກະຈັດກະຈາຍໄປ
15 ມ້າຂອງພຣະອົງຢຽບຢ່ຳນ້ຳທະເລ ນ້ຳເລິກແລະກວ້າງອັນມະຫາສານຟົດຟຸ້ງຂຶ້ນ
16 ເມື່ອຂ້າພຣະອົງໄດ້ຍິນເຣື່ອງເຫລົ່ານີ້ ຂ້າພຣະອົງກໍຢ້ານຈົນຕົວສັ່ນຂວັນເສັຽ ຮິມສົບຂອງຂ້າພຣະອົງກໍສັ່ນ
ດ້ວຍຄວາມຢ້ານ ຕີນຕົວຂອງຂ້າພຣະອົງສັ່ນຄອນໄປ ແລະຕີນຂອງຂ້າພຣະອົງກໍເຕະສະດຸດ ຂ້າພຣະອົງຈະລໍ
ຄອຍວັນແຫ່ງພຣະອົງຈະມາຢ່າງມິດໆ ວັນຊຶ່ງພຣະເຈົ້າຈະລົງໂທດຜູ້ທີ່ໂຈມຕີພວກຂ້າພຣະອົງ

Trust and Joy in the Midst of Trouble

17 ເຖິງແມ່ນວ່າຕົ້ນຫມາກເດື່ອບໍ່ມີຫມາກ ແລະຕົ້ນຫມາກອະງຸ່ນບໍ່ມີຮວງ ກົກຫມາກກອກເຫດບໍ່ມີຜົນ ແລະທົ່ງ
ນາບໍ່ມີເຂົ້າ ເຖິງແມ່ນວ່າ ແກະໃນຝູງຈະຕາຍຫມົດ ແລະຄອກງົວເປົ່າວ່າງ
18 ຂ້າພຣະອົງຍັງຈະຊົມຊື່ນປິຕິຍິນດີ ເພາະວ່າພຣະຜູ້ເປັນເຈົ້າເປັນພຣະຜູ້ຊ່ອຍຂອງຂ້າພຣະອົງ
19 ພຣະຜູ້ເປັນເຈົ້າຊົງປະທານເຫື່ອແຮງໃຫ້ຂ້າພຣະອົງ ພຣະອົງເຮັດໃຫ້ຂ້າພຣະອົງແລ່ນໄວເຫມືອນກວາງ ແລະ
ໃຫ້ຂ້າພຣະອົງຍ່າງເທິງພູຢ່າງປອດພັຍ